ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------000----------

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

4260----

ເລກທີ.........../ຫກ.ມຍ/2016

ນະຄອນຫຼວງວຽງຈັນ, ວັນທີ 13 OCT 2016

**ໜັງສືແຈ້ງການ**

ຮຽນ: ທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ລາຍງານການຈັດຕັ້ງປະຕິບັດຫຼັກສູດ, ການຈັດການຮຽນ-ການສອນ ໂຮງຮຽນນາໆຊາດ, ໂຮງຮຽນ 2 ພາສາ, ໂຮງຮຽນເອກະຊົນ ແລະ ໂຮງຮຽນທີ່ບໍ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ.

- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນນານາຊາດຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ສະບັບເລກທີ 1052 /ສສກ.ມຍ ລົງວັນທີ 26 ກຸພາ 2016.
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ສະບັບເລກທີ 1053/ສສກ.ມຍ ລົງວັນທີ 26 ກຸມພາ 2016.

ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຈຶ່ງແຈ້ງມາຍັງທ່ານຊາບວ່າ: ເພື່ອຄວາມເປັນເອກະພາບຈັດການຮຽນ-ການສອນ ຂອງໂຮງຮຽນເອກະຊົນ, ນາໆຊາດ, ພາກສ່ວນທີ່ບໍ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຫຼັກການຄຸ້ມຄອງໂຮງຮຽນທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້ຈຶ່ງແຈ້ງມາຍັງທາງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງວຽງຈັນ ໃຫ້ຈັດໜ່ວຍງານລົງຕິດຕາມ, ກວດກາ ເບິ່ງການຈັດການຮຽນ-ການສອນ ການປະຕິບັດຫຼັກສູດຂອງໂຮງຮຽນນາໆຊາດ,ໂຮງຮຽນ 2 ພາສາ, ໂຮງຮຽນເອກະຊົນ ແລະ ໂຮງຮຽນທີ່ບໍ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ແລ້ວລາຍງານມາໃຫ້ ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ຮັບຊາບ ກ່ອນວັນທີ 11/11/2016.

ລາຍລະອຽດດັ່ງນີ້:

1. ໂຮງຮຽນນາໆຊາດ (ການຈັດການຮຽນ-ການສອນ ແມ່ນໃຫ້ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນນານາຊາດຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ສະບັບເລກທີ 1052 /ສສກ.ມຍລົງວັນທີ 26 ກຸພາ 2016.)
2. ໂຮງຮຽນເອກະຊົນ ( ແມ່ນໃຫ້ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ສະບັບເລກທີ 1053/ສສກ.ມຍ ລົງວັນທີ 26 ກຸມພາ 2016.) ສໍາລັບໂຮງຮຽນ 2 ພາສາຕ້ອງນໍາໃຊ້ຫຼັກສູດແຫ່ງຊາດແປມາເປັນພາສາຕ່າງປະເທດໂດຍການຮັບຮອງຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາກ່ອນ ຈຶ່ງສາມາດນໍາໃຊ້ຈັດການຮຽນ-ການສອນໄດ້.
3. ໂຮງຮຽນນາໆຊາດທີ່ນໍາໃຊ້ຫຼັກສູດສ້າງຂຶ້ນເອງແມ່ນໃຫ້ເອົາຫຼັກສູດໄປຜ່ານການຮັບຮອງຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ຜ່ານການຮັບຮອງຄຸນນະພາບຈາກສູນຮັບປະກັນຄຸນນະພາບການສຶກສາກະຊວງສຶກສາທິການ ແລະ ກິລາ ກ່ອນ.
4. ສໍາລັບໂຮງຮຽນທີ່ນໍາໃຊ້ຫຼັກສູດແຫ່ງຊາດແຕ່ບໍ່ຂຶ້ນກັບກະຊວງສຶກສາເຊັ່ນ: ໂຮງຮຽນສິນລະປະ ແລະ ອື່ນໆ ຕ້ອງນໍາເອົາຫຼັກສູດໄປຜ່ານ ກະຊວງສຶກສາທິການ ແລະ ກິລາ ຮັບຮອງເພື່ອອະນຸມັດເຂົ້າສອບເສັງນໍາແຂວງ, ນະຄອນຫຼວງວຽງຈັນ.
5. ສໍາລັບນະຄອນຫຼວງວຽງຈັນໂຮງຮຽນອ່ອດສະກາປະຈຸບັນແມ່ນນໍາໃຊ້ຫຼັກສູດແຫ່ງຊາດຂອງລາວເພື່ອລໍຖ້າການອະນຸມັດນໍາໃຊ້ຫຼັກສູດ ນາໆຊາດ ໃນສົກຮຽນ 2018-2019 ແລະ ໂຮງຮຽນສິລະປະແມ່ນທາງໂຮງຮຽນໄດ້ນໍາໃຊ້ຫຼັກສູດຂອງການສຶກສານອກໂຮງຮຽນທີ່ຂຶ້ນກັບກົມການສຶກສານອກໂຮງຮຽນ ແລະ ໄດ້ຈັດການສອບເສັງໄປແລ້ວ 2 ປີ.

ດັ່ງນັ້ນ, ຈຶ່ງແຈ້ງໃຫ້ທ່ານຮັບຊາບ ແລະ ຈັດຕັ້ງປະຕິບັດເປັນເອກະພາບກັນ.

ຫົວໜ້າຫ້ອງການ.

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ສີສະໝອນ ສິດທິຣາດວົງສາ

ໝາຍເຫດ: 22492464 ອຈ ໄຊຍະເດດ